# ທິດສະດີ
# ການເມືອງ - ການປົກຄອງ

## ອາລະສານຄົ້ນຄວ້າຂອງສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ




- ເສີມຂະຫຍາຍບົດບາດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຕິດພັນກັບການພັດທະນາເສດຖະກິດສັງຄົມໃນໄລຍະໃໝ່.
- ການຄຸ້ມຄອງການນຳໃຊ້ທຶນເຂົ້າໃນການແກ້ໄຂໄພພິບັດ ຢູ່ປະເທດເຮົາ.
- ປັບປຸງວຽກງານກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢູ່ອົງຄະນະພັກກະຊວງແຮງງານ ແລະສະຫວັດດີການສັງຄົມ.

ປີທີ 28
ສະບັບທີ 223
ປະຈຳເດືອນ 01
ປີ 2024

# ສາລະບານ

ປອ ໂພທອງ ໄຊທິບວົງສາ: ການບໍລິຫານລັດເອເລັກໂຕຣນິກໃນເງື່ອນໄຂວິທະຍາສາດ ແລະເຕັກໂນໂລຊີຂະຫຍາຕົວ............................ 1

ນ. ວັນສຸກ ພົມທະວົງ: ຍົກສູງບົດບາດວຽກງານຕິດຕາມ, ກວດກາຂອງພັກ ຢູ່ ສ.ປປ ລາວ............................................................ 10

ຄຳຕາວ ວໍລະຈັນສີ: ຍົກສູງຄວາມສາມາດແຂ່ງຂັນຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະກາງ ຢູ່ປະເທດເຮົາ...................... 15

ສຸລິວັນ ແສງດາລາວົງ: ເພີ່ມທະວີວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.............................................................................. 21

ຕົວຢ່າງ ເນັ່ງໄຊເກົ: ພັດທະນາບຸກຄະລາກອນ ຢູ່ຫ້ອງວ່າການສູນກາງພັກໃຫ້ໜັກແໜ້ນ ແລະເຂັ້ມແຂງ............................................. 27

ຄຳຜອງ ພົມມະສອນ: ໝູນໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບການສຶກສາເຂົ້າໃນການປັບປຸງວຽກງານການສຶກສາຢູ່ນະຄອນຫຼວງວຽງຈັນ 31

ນ. ແສງອຳໄພ ໄຊພອນ: ເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກສະຫະພັນແມ່ຍິງ ຢູ່ແຂວງຫົວພັນ....................... 38

ພອນລະພາ ກາບບົວຄຳ: ການຄຸ້ມຄອງສິ່ງແວດລ້ອມ ຢູ່ແຂວງຄຳມ່ວນ.

ປທ. ຈັນເພັງ ມັນທະວົງ: ກໍ່ສ້າງ-ບຳລຸງພະນັກງານທາງດ້ານທິດສະດີການເມືອງ ແລະການປົກຄອງ ຢູ່ໂຮງຮຽນການເມືອງ ແລະການປົກຄອງແຂວງຊຽງຂວາງໃນເງື່ອນໄຂໃໝ່........................................... 44 51

ປີຊາ ອຸດົມ: ເພີ່ມທະວີບົດບາດການຄຸ້ມຄອງເກັບລາຍຮັບສ່ວຍສາອາກອນ ຢູ່ແຂວງວຽງຈັນ ຕາມທິດຫັນເປັນທັນສະໄໝ....................... 58

ນ. ຈັນແສງ ແສງອິນວົງ: ສົ່ງເສີມການລ້ຽງສັດເປັນສິນຄ້າ ຢູ່ແຂວງບໍ່ແກ້ວ...................................................................................... 63

ນ. ໄພວັນ ຜົນທະນາວົງ: ພັດທະນາສີມືແຮງງານໃຫ້ເອື້ອຍນ້ອງແມ່ຍິງຢູ່ແຂວງຊຽງຂວາງ............................................................................ 69

ນ. ດອກໄມ້ ຈັນດາລາ: ຍົກສູງຄຸນນະພາບວຽກງານເສນາທິການ ຢູ່ຫ້ອງວ່າການເມືອງໂພນທອງ ແຂວງຫຼວງພະບາງ......................... 75

ນ. ແສງມະນີ ແກ້ວວົງວິຈິດ: ພັດທະນາເສັ້ນທາງຕາມທິດມີສ່ວນຮ່ວມຂອງປະຊາຊົນ ຢູ່ເມືອງບໍລິຄັນ ແຂວງບໍລິຄຳໄຊ.......................... 81

ຮັກກັນຕະນາ ໂດຍສີປະເສີດ: ຍົກສູງຄຸນນະພາບວຽກງານຄຸ້ມຄອງພະນັກງານ-ລັດຖະກອນ ຢູ່ແຂວງຫຼວງນ້ຳທາ (ຕໍ່ຈາກສະບັບ ປະຈຳເດືອນ 01/2024)......................................................................... 90

ປທ. ນ. ຈອນນີ້ ໄຊຍະຈັກ: ປັບປຸງວຽກງານກຳມະບານ ຢູ່ສະຖາບັນການເມືອງ ແລະການປົກຄອງໃຫ້ມີຄວາມເຂັ້ມແຂງ............................ 93

**ຜູ້ຊີ້ນຳ**
ປທ. ນ. ບຸນມີ ຈຸນລະຈັກ
**ຄະນະບັນນາທິການ**
ປອ. ດາວສະຫວັນ ເຄືອມີໄຊ
ປອ. ຄຳມອນ ຈັນທະຈິດ
ປທ. ນ. ອະໄລລັກ ອະໄພ
**ກອງບັນນາທິການ**
ປທ. ສະນຸກສິນ ໂກສີພັນ
ນ. ພູວຽງ ແກ້ວສີມີໄຊ
ນ. ດອກໄມ້ ຈັນດາລາ
**ກອງເລຂາ**
ນ. ພູວຽງ ແກ້ວສີມີໄຊ
**ຈັດໜ້າ**
ລຳພູນ ຖຸນໄຊຍາ
**ຈຳໜ່າຍ**
ນ. ດອກໄມ້ ຈັນດາລາ
ພຸດທະພອນ ລິນອຸໄທ
**ຮູບພາບ**
ນ. ທິດດາວອນ ດວງປະເສີດ
**ແປສາລະບານ**
ລຳພູນ ຖຸນໄຊຍາ

**ຮູບພາບໜ້າປົກ**
ພິທີສະເຫຼີມສະລອງວັນສ້າງຕັ້ງ
ສະຖາບັນການເມືອງ ແລະການປົກຄອງ
ແຫ່ງຊາດ ຄົບຮອບ 29 ປີ
(27/02/1995-27/02/2024)

**ສຳນັກງານ**
ສູນຂໍ້ມູນຂ່າວສານ
ສະຖາບັນການເມືອງແລະ
ການປົກຄອງແຫ່ງຊາດ

ບ້ານທ່າງ່ອນ ເມືອງໄຊທານີ
ນະຄອນຫຼວງວຽງຈັນ
ໂທລະສັບ/ແຟັກ: 021 752352
020 29994161
ອີເມລ: Valasan.nappa@yahoo.com
ເວບໄຊ: www.nappa.gov.la

# ຫັນການບໍລິຫານລັດແບບທັນສະໄໝ (ລັດດີຈີຕ໋ອນ) ຢູ່ແຂວງອຸດົມໄຊ

ຂຽນໂດຍ: ນ. ສົມລີ ວ້າ

ປັດຈຸບັນເຕັກໂນໂລຊີດີຈີຕ໋ອນມີບົດບາດສຳຄັນທີ່ສຸດບໍ່ອາດສາມາດຂາດໄດ້ໃນການເຄື່ອນໄຫວຊີວິດປະຈຳວັນຂອງຄົນເຮົາ ກໍຄືການພັດທະນາປະເທດຊາດ ແຕ່ໃນນັ້ນກໍມີທັງກາລະໂອກາດ ແລະສິ່ງທ້າທາຍ. ການນຳໃຊ້ເຕັກໂນໂລຊີດີຈີຕ໋ອນເຂົ້າໃນທຸກຂະແໜງການເຮັດໃຫ້ເກີດມີການປ່ຽນແປງ ຫຼື ຜົນກະທົບທາງດ້ານນະວັດຕະກຳຢ່າງວ່ອງໄວ ເຊິ່ງເປັນສິ່ງກະຕຸກຊຸກຍູ້ສຳຄັນໃນການບໍລິຫານແບບທັນສະໄໝ ເປັນຕົ້ນແມ່ນການບໍລິການເທິງຄຣາວ, ຄວາມປອດໄພທາງໄຊເບີ, ປັນຍາປະດິດ, ຂໍ້ມູນໃຫຍ່, ອິນເຕີເນັດສັບພະສິ່ງ, ພາບຈຳລອງທີ່ຄ້າຍຄືຕົວຈິງ, ການສື່ສານຜ່ານໂທລະສັບມືຖື 5G, ກຸ່ມຂໍ້ຜູກພັນ, ເຮືອບິນບໍ່ມີຄົນຂັບ, ຫຸ່ນຍົນ, ສີ່ສັງຄົມອອນລາຍເຕັກໂນໂລຊີ ເຊິ່ງເຫຼົ່ານີ້ຈະມາປ່ຽນແປງອຸດສາຫະກຳ, ກະສິກຳ, ບໍລິການ, ຊີວິດການເປັນຢູ່, ສ້າງຕະຫຼາດໃໝ່, ເກີດມີຜູ້ບໍລິໂພກກຸ່ມໃໝ່ ແລະຮູບແບບທຸລະກິດໃໝ່.

ພັກໄດ້ກະຕຸກຊຸກຍູ້ລັດ ແລະບັນດາຫົວໜ່ວຍທຸລະກິດໃຫ້ມີການປ່ຽນແປງໃໝ່ທາງດ້ານການບໍລິຫານ, ການບໍລິການ, ການຜະລິດ, ທຸລະກິດ, ຕາມທິດຫັນເປັນອຸດສາຫະກຳ ແລະທັນສະໄໝ ແມ່ນຈຸດໝາຍຍຸດທະສາດໃນຂະບວນການສ້າງລະບອບປະຊາທິປະໄຕປະຊາຊົນເພື່ອກ້າວໄປສູ່ສັງຄົມນິຍົມຂອງປະເທດເຮົາ, ການພັດທະນາປະເທດຊາດໃຫ້ມີຄວາມທັນສະໄໝນັ້ນສິ່ງໜຶ່ງທີ່ເປັນປັດໄຈສຳຄັນ ແລະຂາດບໍ່ໄດ້ນັ້ນແມ່ນການນຳເອົາອຸປະກອນ, ເຄື່ອງມື, ເຕັກນິກວິທະຍາສາດ-ເຕັກໂນໂລຊີທີ່ທັນສະໄໝ ແລະການບໍລິການທີ່ສະດວກວ່ອງໄວເຂົ້າໃນການພັດທະນາທຸກຂົງເຂດວຽກງານ, ໃນນັ້ນ, ວຽກງານເຕັກໂນໂລຊີດີຈີຕ໋ອນ ກໍໄດ້ກາຍເປັນເຄື່ອງມືຂັບເຄື່ອນ, ຊຸກຍູ້ຂະບວນການດຳເນີນງານຂອງທຸກຂະແໜງການທັງພາກລັດ ແລະເອກະຊົນໃຫ້ມີການພັດທະນາຫັນໄປສູ່ທັນສະໄໝເທື່ອລະກ້າວ. ໃນມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກໄດ້ເນັ້ນໜັກວ່າ: "ການຂຸດຄົ້ນທຸກຄວາມອາດສາມາດ ຫຼື ທ່າແຮງບົ່ມຊ້ອນຂອງຊາດຕ້ອງຕິດພັນກັບການຫັນເປັນອຸດສາຫະກຳ ແລະທັນສະໄໝ ທັງຮັບປະກັນການພັດທະນາຕາມທິດສີຂຽວ ແລະຍືນຍົງບົນພື້ນຖານການນຳໃຊ້ຜົນສຳເລັດດ້ານວິທະຍາສາດ-ເຕັກໂນໂລຊີ ຢ່າງເປັນລະບົບເຂົ້າໃນໂຄງການພັດທະນາຕົວຈິງ ລັດຕ້ອງມີມາດຕະການສົ່ງເສີມຕໍ່ບັນດາຫົວໜ່ວຍເສດຖະກິດໃນການຫັນເປັນທັນສະໄໝລວມທັງກະຕຸ້ນການນຳໃຊ້ລະບົບດີຈີຕ໋ອນເຂົ້າໃນການຜະລິດການຄ້າ-ການລົງທຶນ ທັງຕ້ອງເລັ່ງລັດການຫັນເປັນທັນສະໄໝໃນກະໂຕການຄຸ້ມຄອງບໍລິຫານລັດອີກດ້ວຍ"[1]. "ການບໍລິຫານລັດຖະບານທັນ

---

[1] ເອກະສານກອງປະຊຸມໃຫຍ່ຄັ້ງທີ XI ພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 54.

ສະໄໝ (ດີຈີຕ໋ອນ) ແມ່ນການເຊື່ອມໂຍງເຕັກໂນໂລຊີດີຈີຕ໋ອນເຂົ້າໃນທຸກຂະແໜງການລັດ ນຳໄປສູ່ການປະຕິຮູບພື້ນຖານຂອງການບໍລິຫານ ແລະບໍລິການລັດໃຫ້ທັນສະໄໝ, ວ່ອງໄວ ແລະໂປ່ງໃສ ເປັນຕົ້ນແມ່ນກອງປະຊຸມທາງໄກ, ການບໍລິຫານເອກະສານ, ການສື່ສານດີຈີຕ໋ອນ ແລະອື່ນໆ"[1]. ສະນັ້ນ, ເພື່ອເຮັດໃຫ້ວຽກງານການບໍລິຫານຂອງລັດ ມີຄວາມທັນສະໄໝ, ວ່ອງໄວ, ປະຢັດ ແລະຮັບປະກັນຄວາມປອດໄພ ແນໃສ່ຫັນການບໍລິຫານລັດແບບລວມສູນ, ມີຄວາມສະດວກ, ໂປ່ງໃສ, ຮັບປະກັນການເຂົ້າເຖິງການບໍລິການຂອງລັດຕໍ່ປະຊາຊົນ, ການພັດທະນາເສດຖະກິດ-ສັງຄົມ, ລັດຍັງໃຫ້ຄວາມສຳຄັນແກ່ການພັດທະນາວຽກງານບໍລິຫານ ແລະບໍລິການຫັນສູ່ທັນສະໄໝຮັບປະກັນຄວາມໂປ່ງໃສ, ວ່ອງໄວໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ດ້ວຍການເອົາໃຈໃສ່ຊຸກຍູ້ພັດທະນາລະບົບເຕັກໂນໂລຊີດີຈີຕ໋ອນສຳລັບວຽກງານບໍລິຫານ ແລະບໍລິການແບບດີຈີຕ໋ອນທີ່ນຳໃຊ້ຊອບແວຣເປີດໂດຍຮັບປະກັນຄວາມປອດໄພຂໍ້ມູນຂ່າວສານຂອງລັດ, ຊຸກຍູ້, ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງມີສ່ວນຮ່ວມໃນການພັດທະນາການບໍລິຫານ ແລະບໍລິການແບບດີຈີຕ໋ອນໃຫ້ເປັນຮູບປະທຳ ແລະບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ເພື່ອຕອບສະໜອງວຽກງານຂອງຕົນຮັບປະກັນການເຊື່ອມໂຍງຂອງລະບົບດັ່ງກ່າວໃຫ້ເປັນເອກະພາບມີປະສິດທິພາບ ແລະປະສິດທິຜົນແນໃສ່ອຳນວຍຄວາມສະດວກ ແລະສະໜອງຂໍ້ມູນເປີດຂອງລັດໃຫ້ແກ່ສັງຄົມ, ເຫັນວ່າມີທ່າອ່ຽງດີຂຶ້ນກໍໄດ້ສ້າງບັນດານິຕິກຳຕ່າງໆເພື່ອສະດວກໃນການຈັດຕັ້ງປະຕິບັດ ເປັນຕົ້ນແມ່ນ ດຳລັດວ່າດ້ວຍການບໍລິການ ແລະບໍລິຫານລັດດີຈີຕ໋ອນ ເລກທີ 290/ລບ, ລົງວັນທີ 17/08/2022; ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກເລກທີ 20/ສພຊ, ລົງວັນທີ 07/12/2012.

ເພື່ອເຮັດໃຫ້ການບໍລິຫານວຽກງານລັດລວມສູນ ມີຄວາມສະດວກ, ໂປ່ງໃສ ກໍຄືຮັບປະກັນການເຂົ້າເຖິງປະຊາຊົນບັນດາເຜົ່າໃນໄລຍະຜ່ານມາຄະນະພັກ, ຄະນະນຳແຂວງອຸດົມໄຊກໍໄດ້ຊີ້ນຳພັດທະນາວຽກງານບໍລິຫານ ແລະບໍລິການດ້ວຍການຫັນເປັນດີຈີຕ໋ອນໃຫ້ນັບມື້ຂະຫຍາຍຕົວເພື່ອຮັບໃຊ້ໜ້າທີ່ການເມືອງ ໄປຄຽງຄູ່ກັບຂົງເຂດວຽກງານອື່ນໆ ເຊິ່ງໄດ້ກາຍເປັນເຄື່ອງມືບໍລິຫານ, ຈັດການ, ຄຸ້ມຄອງລັດແບບທັນສະໄໝ ແລະບໍລິການທັງພາຍໃນລັດເອງ, ລັດຕໍ່ພາກທຸລະກິດ ແລະຕໍ່ສັງຄົມ ເຮັດໃຫ້ປະຊາຊົນສາມາດເຂົ້າເຖິງຂໍ້ມູນຂ່າວສານ, ການສື່ສານ ແລະການບໍລິການອື່ນໆຂອງລັດສະດວກ, ປະຫຍັດ, ວ່ອງໄວ ແລະໂປ່ງໃສສ້າງສະພາບແວດລ້ອມທີ່ດີໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງແຂວງໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ "ການຫັນການບໍລິຫານລັດເປັນທັນສະໄໝກໍເປັນບາດກ້າວໃໝ່ເຮັດໃຫ້ການບໍລິຫານລັດແບບດີຈີຕ໋ອນໄດ້ຮັບຄວາມນິຍົມ ແລະມີຄວາມສະດວກຂຶ້ນຫຼາຍເປັນຕົ້ນແມ່ນ:

1). ການພັດທະນາລະບົບບໍລິຫານລັດດ້ວຍເອເລັກໂຕຣນິກເປັນທັນສະໄໝ.

- ໄດ້ເອົາໃຈໃສ່ເຜີຍແຜ່, ຊຸກຍູ້ບັນດາພະແນກການ, ອົງການຫັນມານຳໃຊ້ລະບົບບໍ

[1] ດຳລັດວ່າດ້ວຍການບໍລິຫານ ແລະບໍລິການລັດແບບດີຈີຕ໋ອນ ສະບັບເລກທີ 290/ລບ ລົງວັນທີ 17 ສິງຫາ 2022, ໜ້າ 1 ແລະ 5.

ລິຫານລັດດີຈີຕ໋ອນ ເປັນຕົ້ນແມ່ນລະບົບຫ້ອງການທັນສະໄໝ (E-office) ໄດ້ 2 ພາກສ່ວນ, ລະບົບປະຊຸມທາງໄກໄດ້ 3 ພາກສ່ວນ, ແພັດຟອມເວັບໄຊພາກລັດໄດ້ 1 ພາກສ່ວນ, ລະບົບອີເມວໄດ້ 2 ພາກສ່ວນ ຈຳນວນ 20 ບັນຊີ, G-chat ໄດ້ 53 ພາກສ່ວນ ຈຳນວນ 446 ບັນຊີ, G-drive ໄດ້ 53 ພາກສ່ວນ ຈຳນວນ 119 ບັນຊີ, ລະຫັດຊື່ອິນເຕີເນັດລາວໄດ້ 6 ພາກສ່ວນ ຈຳນວນ 11 ຄັ້ງ; ອອກໃບອະນຸຍາດດຳເນີນທຸລະກິດດ້ານໄອຊີທີ ຈຳນວນ 74 ຮ້ານ, ລົງຄະແນນສຽງແບບເອເລັກໂຕຣນິກຮັບຮອງມະຕິຕ່າງໆຂອງສະພາປະຊາຊົນແຂວງ, ລະບົບບັນທຶກເຂົ້າການ-ເລີກການຂອງພະນັກງານ; ຄຸ້ມຄອງອຳນວຍຄວາມສະດວກໃນການນຳໃຊ້ລະບົບກອງປະຊຸມທາງໄກພາຍໃນ ແລະຕ່າງແຂວງ ຈຳນວນ 11 ຄັ້ງ.

2). ດ້ານໄປສະນີ ແລະໂທລະຄົມ.

- ໄປສະນີທົ່ວແຂວງໃຫ້ການບໍລິການຮັບ-ສົ່ງຈົດໝາຍພາຍໃນ ແລະຕ່າງປະເທດທັງໝົດ 18 ບໍລິສັດ, ໄດ້ໃຫ້ບໍລິການຮັບ-ສົ່ງຈົດໝາຍທັງໝົດ 453 ສະບັບ, ບໍລິການຮັບ-ສົ່ງເມດ່ວນ ຈຳນວນ 290 ສະບັບ, ໃບຝາກເງິນ ຈຳນວນ 89 ໃບ ດ້ານອື່ນໆບັນລຸໄດ້ 560,92 ລ້ານກີບ, ມອບພັນທະເຂົ້າລັດໄດ້ 39,53 ລ້ານກີບທຽບໃສ່ແຜນປະຕິບັດໄດ້ 41%.

- ດ້ານໂທລະຄົມທົ່ວແຂວງມີການບໍລິການດ້ານໂທລະຄົມທັງໝົດ 4 ບໍລິສັດ, ມີ 754 ສະຖານີຮັບ-ສົ່ງສັນຍານ ເຊິ່ງສາມາດສ້າງລາຍຮັບ 67.607,25 ລ້ານກີບ, ມອບເຂົ້າງົບປະມານຂອງລັດໄດ້ 3.167,43 ລ້ານກີບ ທຽບໃສ່ແຜນປີປະຕິບັດໄດ້ 80,74%”[1].

ໃນໄລຍະຜ່ານມາການຫັນເປັນດີຈີຕ໋ອນຢູ່ແຂວງອຸດົມໄຊໄດ້ຮັບຜົນດີພໍສົມຄວນ ເຊິ່ງຊ່ວຍກະຕຸກຊຸກຍູ້, ສົ່ງເສີມການຫັນເປັນທັນສະໄໝໃນລະບົບບໍລິຫານ ແລະບໍລິການດຳເນີນງານຂອງການຈັດຕັ້ງລັດຂະແໜງຕ່າງໆຢ່າງກວ້າງຂວາງ, ສົ່ງເສີມການຄົ້ນຄວ້າ, ປະດິດສ້າງນະວັດຕະກຳດີຈີຕ໋ອນ, ພັດທະນາຂໍ້ມູນຂ່າວສານໃຫ້ມີການເຊື່ອມໂຍງເຊື່ອມຈອດກັນ ພ້ອມທັງຄຸ້ມຄອງຕິດຕາມ, ກວດກາການນຳໃຊ້ເຕັກໂນໂລຊີດີຈີຕ໋ອນ, ໄອຊີທີ, ລະບົບເວັບໄຊ, ຖານຂໍ້ມູນ, ລາຍເຊັນເອເລັກໂຕຣນິກ, ຫ້ອງການທັນສະໄໝ, ກອງປະຊຸມທາງໄກ, ອີເມວພາກລັດ ແລະລະບົບອື່ນໆທີ່ກ່ຽວຂ້ອງກັບລະບົບການບໍລິຫານ ແລະບໍລິການແບບດີຈີຕ໋ອນ.

ຜ່ານການຫັນການບໍລິຫານລັດແບບດີຈີຕ໋ອນມີຜົນສຳເລັດຈຳນວນໜຶ່ງ ແຕ່ຖ້າທຽບໃສ່ການພັດທະນາຂອງຍຸກໃໝ່ເຫັນວ່າຄວນເອົາໃຈໃສ່ປັບປຸງແກ້ໄຂບາງດ້ານຕື່ມດັ່ງນີ້:

1). ພະນັກງານວິຊາການຈຳນວນໜຶ່ງຍັງຂາດປະສົບການບາງດ້ານ ໂດຍສະເພາະແມ່ນທັກສະໃນການນຳໃຊ້ເຄື່ອງມືທີ່ທັນສະໄໝເຂົ້າໃນການບໍລິການວຽກງານ.

2). ຄວາມຮັບຮູ້ຂອງສັງຄົມກ່ຽວກັບການນຳໃຊ້ໄອຊີທີໃຫ້ເກີດປະໂຫຍດ ແລະມີຄວາມປອດໄພບໍ່ທັນກວ້າງຂວາງ, ເລິກເຊິ່ງເທົ່າທີ່ຄວນ ສະແດງອອກຍັງເກີດມີປາກົດການຫຍໍ້ທໍ້ຜ່ານສື່ສັງຄົມອອນລາຍ.

3). ການຄຸ້ມຄອງການນຳໃຊ້ຄື້ນຄວາມ

[1] ບົດສະຫຼຸບຈັດຕັ້ງປະຕິບັດແຜນພັດທະນາວຽກງານເຕັກໂນໂລຊີ ແລະການສື່ສານປີ 2022 ແລະທິດທາງແຜນການພັດທະນາວຽກງານເຕັກໂນໂລຊີ ແລະການສື່ສານ, ປີ 2023, ໜ້າ 5-7.

ຖີ່ວິທະຍຸສື່ສານໂຟນີ, ໂດຣນຍັງບໍ່ທັນທັນເຂົ້າສູ່ກົດໝາຍ ແລະລະບຽບການ ໂດຍສະເພາະແມ່ນບັນດາໂຄງການພັດທະນາ, ຜູ້ປະກອບການຍັງບໍ່ທັນໃຫ້ຄວາມຮ່ວມມືໃນການແຈ້ງຂໍ້ມູນຂຶ້ນທະບຽນຢ່າງຖືກຕ້ອງ, ຍັງຂາດເຄື່ອງມືໃນການຄຸ້ມຄອງ, ຕິດຕາມ, ກວດກາ.

4). ການຂຶ້ນທະບຽນໝາຍເລກໂທລະສັບຍັງບໍ່ທັນເຮັດໄດ້ຢ່າງເດັດຂາດ ແລະບໍ່ທັນມີລະບົບຕິດຕາມກວດສອບຂໍ້ມູນການຂຶ້ນທະບຽນ.

ເພື່ອທັນການບໍລິຫານລັດແບບທັນສະໄໝຢູ່ແຂວງອຸດົມໄຊໃຫ້ມີປະສິດທິຜົນຂຶ້ນໃນຕໍ່ໜ້າຄວນເອົາໃຈໃສ່ບາງດ້ານດັ່ງນີ້:

ໜຶ່ງ, ພັດທະນາບຸກຄະລາກອນໃຫ້ມີຄວາມຮູ້, ຄວາມສາມາດດ້ານເຕັກໂນໂລຊີດ້ວຍການຍົກລະດັບດ້ານວິຊາສະເພາະ, ທັກສະໃນການນຳໃຊ້ເຕັກໂນໂລຊີ ແລະນະວັດຕະກຳເຂົ້າໃນວຽກງານວິຊາສະເພາະ, ພັດທະນາ, ສົ່ງເສີມ ແລະຖ່າຍທອດເຕັກໂນໂລຊີໃຫ້ບັນດາອົງການພາກລັດ, ເອກະຊົນ ເປັນຕົ້ນແມ່ນສົ່ງເສີມການຮຽນຮູ້, ສະໜັບສະໜູນການເຝິກອົບຮົມ ແລະສ້າງຄວາມເຂັ້ມແຂງໃຫ້ແກ່ຂີດຄວາມສາມາດຂອງພະນັກງານ ລັດຖະກອນໃນການນຳໃຊ້ເຕັກໂນໂລຊີດີຈີຕ໋ອນເພື່ອປະກອບເຂົ້າໃນການຮັບໃຊ້ການທັນເປັນທັນສະໄໝ; ຊຸກຍູ້ສົ່ງເສີມຫົວຄິດປະດິດສ້າງ, ສະຕິປັນຍາ ແລະນຳສະເໜີແນວຄວາມຄິດຂອງນັກຄົ້ນຄວ້າ, ນັກພັດທະນາ, ປັນຍາຊົນ ແລະບຸກຄົນທົ່ວສັງຄົມໃນການຄົ້ນຄວ້າ, ວິໄຈ, ສ້າງ, ພັດທະນາ, ເລືອກເຟັ້ນ, ນຳໃຊ້, ແລະໃຫ້ການບໍລິການດ້ານເຕັກໂນໂລຊີ ແລະນະວັດຕະກຳ, ປັນຍາປະດິດ, ຂໍ້ມູນມະຫານສານ, ເຕັກໂນໂລຊີລະດັບສູງ, ເຕັກໂນໂລຊີອັດສະລິຍະ, ເຕັກໂນໂລຊີຂໍ້ມູນຜູກພັນ, ເຕັກໂນໂລຊີຂໍ້ມູນພາບຖ່າຍດາວທຽມ, ລະບົບຂໍ້ມູນພູມີສາດ, ລະບົບຈຸດພິກັດລວມ ແລະອື່ນໆ ເພື່ອຍົກສູງປະສິດທິພາບຂອງວຽກງານໃຫ້ສູງຂຶ້ນ.

ສອງ, ສົ່ງເສີມການນຳໃຊ້ເຕັກໂນໂລຊີດີຈີຕ໋ອນເຂົ້າໃນທຸກຂະແໜງໃຫ້ເປັນປະໂຫຍດ, ປອດໄພ ແລະສະກັດກັ້ນການເກີດປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສື່ສັງຄົມອອນລາຍ ດ້ວຍການກະຕຸກຊຸກຍູ້, ການບໍລິການລັດເປັນທັນສະໄໝໃຫ້ເປັນປະໂຫຍດ ໂດຍສະເພາະແມ່ນເຕັກໂນໂລຊີນະວັດຕະກຳ, ເຕັກໂນໂລຊີລະດັບສູງ, ເຕັກໂນໂລຊີອັດສະລິຍະ, ເຕັກໂນໂລຊີຂໍ້ມູນຜູກພັນ, ເຕັກໂນໂລຊີຂໍ້ມູນຜູກພັກ, ເຕັກໂນໂລຊີຂໍ້ມູນພາບຖ່າຍດາວທຽມ, ເຕັກໂນໂລຊີຂໍ້ມູນຂ່າວສານ ມາເປັນແຜນງານ, ແຜນການ ແລະໂຄງການເພື່ອຮັບໃຊ້ສັງຄົມພາກລັດ, ເອກະຊົນ ແລະສາມາດເຊື່ອມໂຍງກັບສາກົນ; ຕ້ານ ແລະສະກັດກັ້ນໄພຄຸກຄາມຄວາມປອດໄພລະບົບຄອມພິວເຕີ, ຕິດຕາມທາງສຽງສັງຄົມຜ່ານສື່ສັງຄົມອອນລາຍ, ປົກປ້ອງເດັກພັກ-ລັດ ແລະປະຊາຊົນໃນການນຳໃຊ້ອິນເຕີເນັດ, ເພື່ອບໍ່ເສຍຜົນປະໂຫຍດຈາກການນຳໃຊ້ອິນເຕີເນັດ ຊ່ວຍພັດທະນາເວັບໄຊ ພ້ອມທັງເຝິກອົບຮົມເຕັກນິກໃນການຄຸ້ມຄອງນຳໃຊ້ໃຫ້ບັນດາພະແນກການ, ອົງການຂັ້ນແຂວງ ແລະບັນດາເມືອງທີ່ຍັງບໍ່ທັນມີເວັບໄຊທາງການ ເພື່ອເຮັດໃຫ້ປະຊາຊົນເຂົ້າເຖິງຂໍ້ມູນຂ່າວສານພາກລັດ ແລະເອກະຊົນໄດ້ສະດວກຂຶ້ນ; ສ້າງກິດຈະກຳສົ່ງເສີມ, ປູກຈິດສຳນຶກການນຳໃຊ້ອິນເຕີເນັດໃຫ້ເກີດຜົນປະໂຫຍດ, ຕິດຕາມຂໍ້ມູນຂ່າວສານຄວາມປອດໄພໄຊເບີ ແລະຂຽນບົດຄວາມແຈ້ງເຕືອນຄວາມປອດໄພທາງໄຊເບີເຜີຍແຜ່ລົງໃນເວັບ




ພິທີເປີດງານສັບປະດາດີຈີຕ໋ອນລາວ ປະຈຳປີ 2024 ແລະ ໄດ້ປະກາດວັນທີ 10 ມັງກອນ ເປັນວັນດີຈີຕ໋ອນແຫ່ງຊາດ ພ້ອມທັງເປີດໃຊ້ບໍລິການ 5G ໃນ ສປປ ລາວ ຢ່າງເປັນທາງການ ໂດຍໃຫ້ກຽດເຂົ້າຮ່ວມຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີແຫ່ງ ສປປ ລາວ

ໄຊ, ເຟສບຸກ, ສັງລວມບັນດາໄພຄຸກຄາມທາງໄຊເບີ ແລະບັນຫາຕ່າງໆທີ່ເກີດຂຶ້ນທາງອິນເຕີເນັດ; ຈັດເຝິກອົບຮົມໃຫ້ຄວາມຮູ້ກ່ຽວກັບການຕ້ານ ແລະສະກັດກັ້ນອາດຊະຍາກຳທາງລະບົບຄອມພິວເຕີ, ຄວາມປອດໄພທາງຂໍ້ມູນຂ່າວສານ, ການນຳໃຊ້ສື່ຂໍ້ມູນອອນລາຍຢ່າງຖືກຕ້ອງ ແລະມີຄວາມປອດໄພ, ແນະນຳກ່ຽວກັບວິທີປ້ອງກັນ, ແກ້ໄຂທາງດ້ານເຕັກນິກ, ລະບົບເຄືອຂ່າຍ ແລະອຸປະກອນເອເລັກໂຕຣນິກໃຫ້ບັນດາການຈັດຕັ້ງພາກລັດ ແລະພາກສ່ວນຕ່າງໆຮັບຮູ້ ແລະເຂົ້າໃຈ; ເພີ່ມຄວາມເຂັ້ມງວດໃນການສະກັດກັ້ນບັນດາປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມອອນລາຍ.

ສາມ, ສ້າງ ແລະປັບປຸງນິຕິກຳໃຫ້ເປັນລະບົບຄົບຊຸດເພື່ອຄຸ້ມຄອງການນຳໃຊ້ຄື້ນຄວາມຖີ່ວິທະຍຸ, ສື່ສານ, ໂຟນີ ແລະອື່ນໆ ດ້ວຍການສ້າງນິຕິກຳໃຕ້ກົດໝາຍຂອງແຂວງກ່ຽວກັບການຄຸ້ມຄອງວຽກງານຫັນເປັນດີຈີຕ໋ອນ ແລະຄວາມປອດໄພໄຊເບີ ເປັນຕົ້ນແມ່ນວຽກງານເຕັກໂນໂລຊີ, ນະວັດຕະກຳເພື່ອຮອງຮັບການຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິພາບ, ປະສິດທິຜົນແນໃສ່ປົກປ້ອງສິດ ແລະຜົນປະໂຫຍດຂອງການຈັດຕັ້ງພັກ-ລັດ ແລະສັງຄົມ; ປະເມີນຄືນກົດໝາຍການຄຸ້ມຄອງທີ່ມີຢູ່ ແລະຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ; ສ້າງ ແລະປັບປຸງນິຕິກຳກົດໝາຍເພື່ອຄຸ້ມຄອງ, ສົ່ງເສີມການຫັນເປັນດີຈີຕ໋ອນ; ສ້າງນະໂຍບາຍ ເພື່ອສົ່ງເສີມການນຳໃຊ້ເຕັກໂນໂລຊີດີຈີຕ໋ອນ, ສ້າງເງື່ອນໄຂຄວາມສາມາດໃນການລົງທຶນເຂົ້າໃສ່ການຈັດຊື້-ຕິດຕັ້ງເຕັກໂນໂລຊີດີຈີຕ໋ອນ, ຄວາມສາມາດໃນການເຂົ້າເຖິງ ແລະຊົມໃຊ້ອິນເຕີເນັດຄວາມໄວສູງ.

ສີ່, ເພື່ອສະດວກໃນການຄຸ້ມຄອງໝາຍເລກໂທລະສັບນັ້ນຄວນເອົາໃຈໃສ່ຕື່ມຕໍ່ກັບການອອກໃບອະນຸຍາດໃຫ້ຕົວແທນຈຳໜ່າຍຊິມຄາດ, ຕິດຕັ້ງເສົາສະຖານີຮັບ-ສົ່ງສັນຍານ (BTS) ຂອງບັນດາບໍລິສັດຜູ້ໃຫ້ການບໍລິການດ້ານໂທລະຄົມມະນາຄົມ ແລະຕໍ່ໃບອະນຸຍາດ, ຕິດຕາມ, ກວດກາ ແລະລາຍງານສະພາບການນຳໃຊ້ເລກໝາຍໂທລະສັບພິເສດຕໍ່ກະຊວງ; ຍົກລະດັບພື້ນຖານໂຄງລ່າງໂທລະຄົມມະນາຄົມໃຫ້ເປັນລະບົບຄວາມໄວສູງ (ລະບົບ 4G, 5G) ກວມພື້ນທີ່ຕົວເມືອງ, ຕາມເຂດເສດຖະກິດແລວລົດໄຟລາວ-ຈີນ, ເຂດຈຸດສຸມ; ພັດທະນາເຄືອຂ່າຍ ແລະການບໍລິການໃຫ້ມີຄຸນນະພາບ ພ້ອມທັງຂະຫຍາຍພື້ນຖານໂຄງລ່າງໂທລະຄົມມະນາຄົມໃຫ້ສັນຍານໂທລະສັບຄວບຄຸມ 94,7% ຂອງຈຳນວນບ້ານໃນທົ່ວແຂວງ; ສູ້ຊົນຕິດຕັ້ງລະບົບເຄືອຂ່າຍພາກລັດຈາກສູນກາງເຊື່ອມເຂົ້າຫ້ອງວ່າການແຂວງໃຫ້ສຳເລັດເພື່ອເຊື່ອມໂຍງຂໍ້ມູນ ລະຫວ່າງສູນກາງຫາທ້ອງຖິ່ນໃຫ້ມີຄວາມໄວ ແລະປອດໄພ; ຊຸກຍູ້, ສົ່ງເສີມການນຳໃຊ້ສື່ອິນເຕີເນັດລາວ, ອອກແບບ ແລະປັບປຸງລະບົບເຄືອຂ່າຍຄອມພິວເຕີພາຍໃນພະແນກເພື່ອໃຫ້ສາມາດບໍລິຫານຈັດການໄດ້ສະດວກ ແລະມີປະສິດທິພາບດີຂຶ້ນຮອງຮັບການພັດທະນາລະບົບດິຈິຕ໋ອນ ແລະທັນເປັນທັນສະໄໝ. ພ້ອມກັນນັ້ນ, ກໍເຮັດໃຫ້ການສື່ສານ, ແລກປ່ຽນ ແລະແບ່ງຂໍ້ມູນຂ່າວສານມີຄວາມສະດວກ ແລະປະຢັດງົບປະມານທີ່ບໍ່ຈຳເປັນ.

ສັງລວມແລ້ວ, ການຫັນເປັນດິຈິຕ໋ອນຢູ່ແຂວງອຸດົມໄຊ ໃນໄລຍະຜ່ານມາແມ່ນຂະຫຍາຍຕົວຢ່າງວ່ອງໄວບໍ່ວ່າຈະເປັນທາງດ້ານປະລິມານ ແລະຄຸນນະພາບ ສະແດງໃຫ້ເຫັນເຖິງຜົນສຳເລັດຫຼາຍໆດ້ານເຊັ່ນ: ການນຳພາ-ຊີ້ນຳ, ການຈັດຕັ້ງປະຕິບັດກົດໝາຍ, ການປັບປຸງກົງຈັກ ແລະການຕິດຕາມກວດກາ, ການຄຸ້ມຄອງການນຳໃຊ້ເຕັກໂນໂລຊີດິຈິຕ໋ອນ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະການສື່ສານ ໃນການບໍລິຫານ ແລະບໍລິການລັດ, ການສົ່ງເສີມ, ພັດທະນາລະບົບບໍລິຫານ ແລະບໍລິການລັດດ້ວຍດິຈິຕ໋ອນ ແຕ່ເຖິງຢ່າງໃດກໍຕາມຂອດການຄຸ້ມຄອງວຽກງານຫັນເປັນລັດແບບດິຈິຕອ໋ນ ກໍຍັງມີຫຼາຍດ້ານທີ່ຈະຕ້ອງເອົາໃຈໃສ່ປັບປຸງຕື່ມເຊັ່ນ: ກົງຈັກການຈັດຕັ້ງຄຸ້ມຄອງຍັງບໍ່ທັນເປັນລະບົບຄົບຊຸດ, ນິຕິກຳຕ່າງໆຍັງບໍ່ທັນຕອບສະໜອງກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ, ກົນໄກການຄຸ້ມຄອງຍັງບໍ່ທັນຄ່ອງຕົວ, ຍັງຂາດເຂີນພະນັກງານທີ່ມີຄວາມຮູ້ໃນການຄຸ້ມຄອງ, ອຸປະກອນຍັງບໍ່ທັນພຽງພໍເທື່ອ. ສະນັ້ນ, ຖ້າຢາກຫັນການບໍລິຫານເປັນທັນສະໄໝດິຈິຕ໋ອນຢູ່ແຂວງອຸດົມໄຊໃຫ້ໄດ້ຮັບໝາກຜົນນັ້ນຄວນໄດ້ມີທິດທາງທີ່ເໝາະສົມ ແລະໃຊ້ວິທີການທີ່ສອດຄ່ອງ.

# ປັບປຸງວຽກງານຂ່າວສານທາງດ້ານຂ່າວວິທະຍຸ-ໂທລະພາບ ຢູ່ແຂວງຊຽງຂວາງໃນເງື່ອນໄຂປັດຈຸບັນ

ຂຽນໂດຍ: ບຸນມີ ທິບມີໄຊ

ໃນພາລະກິດປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ ກໍຄືພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານທີ່ມີຫຼັກການຂອງພັກ ບົນເສັ້ນທາງກ້າວຂຶ້ນສັງຄົມນິຍົມຢູ່ປະເທດເຮົາ ໂດຍສະເພາະແມ່ນການປະຕິບັດກົນໄກເສດຖະກິດຕະຫຼາດພາຍໃຕ້ການນຳພາຂອງພັກ, ວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບໄດ້ມີບົດບາດນຳໜ້າ ແລະມີສາຍໄຍກ່ຽວພັນສະໜິດແໜ້ນແບບກາຍອິນຊີກັບທຸກຂົງເຂດວຽກງານ; ນັບທັງວຽກງານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະອື່ນໆ; ທັງເປັນເສນາທິການ, ເປັນຜູ້ໃຫ້ຂໍ້ມູນ ແລະທັງເປັນຜູ້ຕິດຕາມ, ກວດກາປະເມີນຜົນຂອງການເຄື່ອນໄຫວວຽກງານດັ່ງກ່າວ; ພ້ອມດຽວກັນນີ້ວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບຍັງໄດ້ຕິດພັນກັບຊີວິດຕົວຈິງຂອງສັງຄົມເປັນປະຈຳໃນແຕ່ລະວັນ, ເປັນສື່ກາງສະແດງຄວາມຄິດຄວາມເຫັນໃນດ້ານທັດສະນະທີ່ສ້າງສັນກ່ຽວກັບການນຳພາຂອງພັກ, ການຄຸ້ມຄອງຂອງລັດ ແລະການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ ທັງເປັນການຂະຫຍາຍຕະຫຼາດສິນຄ້າທາງດ້ານພູມປັນຍາ; ສະນັ້ນ, ວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບຈຳເປັນຕ້ອງໄດ້ປັບປຸງໃຫ້ມີຄຸນນະພາບດີຂຶ້ນໃນທຸກດ້ານ.

ເພື່ອເຮັດສຳເລັດໜ້າທີ່ດັ່ງກ່າວນັ້ນ, ພັກເຮົາໄດ້ເອົາໃຈໃສ່ປົວແປງຊີວິດການເປັນຢູ່ທາງດ້ານວັດຖຸ ແລະຈິດໃຈຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນເທື່ອລະກ້າວ; ພື້ນຖານເສດຖະກິດ, ວັດທະນະທຳ-ສັງຄົມໄດ້ຮັບການພັດທະນາດ້ວຍຈັງຫວະທີ່ໜັກແໜ້ນ ແລະຕໍ່ເນື່ອງ ວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບຍິ່ງມີບົດບາດສຳຄັນໃນການປຸກລະດົມທົ່ວປວງຊົນດຳເນີນການປົກປັກຮັກສາ ແລະກໍ່ສ້າງລະບອບໃໝ່ ຍາມໃດພັກ ແລະລັດ ກໍຖືເອົາວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບ ເປັນພາຫະນະອັນແຫຼມຄົມໃນການເຜີຍແຜ່ແນວທາງຂອງພັກ ນະໂຍບາຍ, ກົດໝາຍ ແລະລະບຽບຂອງລັດ, ເປັນຂົວຕໍ່ ລະຫວ່າງພັກ-ລັດກັບປະຊາຊົນ, ເປັນວຽກແຖວໜ້າໃນສະໜາມຮົບການເມືອງແນວຄິດ, ເປັນຜູ້ນຳສະເໜີຜົນງານໃນແຕ່ລະໄລຍະລົງສູ່ປະຊາຊົນບັນດາເຜົ່າຢ່າງກວ້າງຂວາງ ແລະຕໍ່ເນື່ອງ, ແຕ່ມາເຖິງໄລຍະນີ້ເຫັນວ່າບົດບາດຂອງສື່ມວນຊົນເວົ້າລວມ, ເວົ້າສະເພາະແມ່ນວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບໄດ້ມີການປັບປຸງ ແລະປ່ຽນແປງໄປສູ່ຄຸນນະພາບໃໝ່ "ສື່ມວນຊົນໄດ້ມີການຂະຫຍາຍຕົວທັງດ້ານປະລິມານ ແລະຄຸນນະພາບ, ໃນນັ້ນໄດ້ປັບປຸງລະບົບສື່ມວນຊົນໃຫ້ເປັນທັນສະໄໝ ດ້ວຍການຫັນປ່ຽນຈາກລະບົບອະນາລ໋ອກໄປສູ່ລະບົບດິຈິຕ໋ອນ, ການໂຄສະນາແນວທາງຂອງພັກ-ລັດຖະບານກໍມີຄວາມວ່ອງໄວຂຶ້ນກວ່າເກົ່າ ດ້ວຍການນຳໃຊ້ສື່ສິ່ງພິມ, ສື່ອີເລັກໂຕຣນິກ ແລະສື່ອອນ

ລາຍຕ່າງໆ"[1] ເພື່ອຕອບສະໜອງຂໍ້ມູນຂ່າວສານ, ສາລະຄວາມຮູ້ ແລະການບັນເທີງທີ່ເປັນປະໂຫຍດແກ່ສັງຄົມ ວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບມີຄວາມຈຳເປັນຢ່າງຍິ່ງທີ່ຈະສຳນຶກເຖິງການປ່ຽນແປງທີ່ພວກເຮົາດຳເນີນມາກ່ອນນັ້ນໃຫ້ສາມາດຕອບສະໜອງໄດ້ ຕາມຄວາມຮຽກຮ້ອງຕ້ອງການອັນໃໝ່ຂອງປະຊາຊົນບັນດາເຜົ່າ.

ການປັບປຸງວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບ ແມ່ນການປັບປຸງທັງໝົດຂອງວຽກງານຂ່າວ ໂດຍເລີ່ມຈາກການນຳພາ-ຊີ້ນຳຂອງຄະນະພັກ, ການຄຸ້ມຄອງບັນຊາອຳນວຍຄວາມສະດວກຂອງອົງການປົກຄອງຂັ້ນຕ່າງໆຕໍ່ວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບ ແຕ່ໃນນັ້ນແມ່ນເລັ່ງໃສ່ທາງດ້ານເນື້ອໃນເປັນໃຈກາງ, ທາງດ້ານຮູບການ, ວິທີການ, ງົບປະມານເປັນບັນຫາສຳຄັນຕັດສິນທຸກຮູບແບບຂອງການປັບປຸງວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບໃນແຕ່ລະຂັ້ນ ໝາຍຄວາມວ່າທຸກເນື້ອໃນ, ຮູບການຕ້ອງມີການພົວພັນ ແລະກົມກຽວກັນຢ່າງສະນິດແໜ້ນແບບກາຍອິນຊີ ທັງສ່ອງແສງເຖິງການເຄື່ອນໄຫວຕົວຈິງຂອງສັງຄົມລວມທັງທິດສະດີ ແລະພຶດຕິກຳໃນແຕ່ລະໄລຍະຢ່າງເໝາະສົມ.

ວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບໄດ້ເຮັດໜ້າທີ່ໂຄສະນາເຜີຍແຜ່ແນວທາງຂອງພັກ, ນະໂຍບາຍ, ກົດໝາຍ, ລະບຽບຂອງລັດ ໂດຍສະເພາະແມ່ນການນຳສະເໜີຂ່າວດຳເນີນກອງປະຊຸມໃຫຍ່ຂອງອົງຄະນະພັກແຂວງຊຽງຂວາງ ເຊິ່ງເປັນກອງປະຊຸມໃຫຍ່ທີ່ສຳຄັນທີ່ສຸດທີ່ໄດ້ມີການສັງລວມບັນດາບົດຮຽນ ແລະວາງນະໂຍບາຍຂອງພັກໃນແຕ່ລະໄລຍະເພື່ອໃຫ້ປະຊາຊົນຮັບຮູ້ໄດ້ໂດຍໄວ ແລະກວ້າງຂວາງ. ນອກນັ້ນ, ຍັງໄດ້ນຳສະເໜີຂ່າວບັນດາກອງປະຊຸມປະຈຳເດືອນ, ປະຈຳໄຕມາດ, ປະຈຳປີຂອງບັນດາພະແນກການ, ຂອງເມືອງ ແລະການຈັດຕັ້ງຕ່າງໆ ເປັນປະຈຳເຮັດໃຫ້ປວງຊົນຮັບຮູ້ຢ່າງຖືກຕ້ອງ.

ພາຍໃຕ້ການຊີ້ນຳຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ຄະນະພັກ, ອົງການປົກຄອງຂອງແຂວງຊຽງຂວາງ ກໍຄືພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ແຂວງຊຽງຂວາງ ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ການເມືອງຂອງຕົນດ້ວຍຄວາມຮັບຜິດຊອບສູງ ໄດ້ຮັບບົດບາດສຳຄັນໃນວຽກງານການເມືອງ-ແນວຄິດປະກອບສ່ວນໂຄສະນາເຜີຍແຜ່ແນວທາງຂອງພັກ ນະໂຍບາຍ, ກົດໝາຍ, ລະບຽບຂອງລັດ, ສ່ອງແສງເຖິງຄວາມມຸ່ງມາດປາດຖະໜາ ແລະຂະບວນການເຄື່ອນໄຫວຂອງປະຊາຊົນ ເພື່ອປຸກລະດົມໃຫ້ທຸກຊັ້ນຄົນເຂົ້າຮ່ວມໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຕ່ລະໄລຍະ, ຍົກລະດັບຄວາມຮູ້, ຄວາມສາມາດດ້ານຕ່າງໆໃຫ້ແກ່ປະຊາຊົນ ສ່ອງແສງວຽກດີຄົນເດັ່ນ, ປະກອບສ່ວນຕອບຕ້ານການໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີຂອງຄົນບໍ່ດີຕໍ່ລະບອບໃໝ່ ແລະຕໍ່ແນວທາງຂອງພັກ, ນະໂຍບາຍ, ກົດໝາຍ ແລະລະບຽບຂອງລັດໄດ້ເປັນຢ່າງດີ ໄດ້ເຮັດໃຫ້ແຂວງຊຽງຂວາງມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ, ມີຄວາມເປັນລະ

[1] ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ, ປີ 2021, ໜ້າ 106.

ບຽບຮຽບຮ້ອຍທາງສັງຄົມ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.

"ກອງວິຊາການວິທະຍຸ-ໂທລະພາບແຂວງຊຽງຂວາງມີພະນັກງານ-ລັດຖະກອນທັງໝົດ 24 ຄົນ, ຍິງ 11 ຄົນ; ລະດັບຄວາມຮູ້ດ້ານວິຊາສະເພາະປະກອບດ້ວຍຊັ້ນປະລິນຍາຕີ ຈຳນວນ 11 ຄົນ, ຍິງ 3 ຄົນ, ຊັ້ນສູງຈຳນວນ 13 ຄົນ, ຍິງ 8 ຄົນ"(1) ວິທະຍຸກະຈາຍສຽງແຂວງຊຽງຂວາງກະຈາຍສຽງໃນລະບົບ FM ຂະໜາດຄື່ນຄວາມຖີ່ 98.0 MHz ກະຈາຍສຽງວັນລະ 2 ຕອນຄື: "ຕອນເຊົ້າເລີ່ມເວລາ 5:55 ນາທີຫາ 10:30 ນາທີ, ຕອນແລງເລີ່ມແຕ່ເວລາ 15:55 ນາທີຫາ 20:30 ນາທີ, ກະຈາຍສຽງເປັນ 3 ພາສາ (ພາສາລາວ, ພາສາມົ້ງ ແລະ ພາສາກຶມມຸ) ມີ 30 ລາຍການ; ໃນນີ້, ລາຍການຂອງສະຖານີວິທະຍຸແຂວງມີ 17 ລາຍການ ແລະລາຍການຂອງພະແນກການ, ກົມກອງຕ່າງໆ ແລະບັນດາເມືອງມີ 13 ລາຍການ, ມີສັນຍານ ກວມ 40% ຂອງພື້ນທີ່ພາຍໃນແຂວງ; ສຳລັບໂທລະພາບແມ່ນສົ່ງຜ່ານລະບົບດາວທຽມລາວແຊດ ແລະລະບົບດີຈິຕ້ອນເຄເບີນພູວອນ ແລະເຄເບີນຟູຫວນມີສັນຍານ ກວມ 15% ຂອງພື້ນທີ່ພາຍໃນແຂວງກະຈາຍພາບວັນລະ 2 ຕອນຄື: ຕອນເຊົ້າເລີ່ມເວລາ 7:30 ຫາ 8:00 ນາທີ, ຕອນແລງເລີ່ມເວລາ 19:30 ຫາ 20:30 ນາທີ, ກະຈາຍພາບເປັນ 3 ພາສາ (ພາສາລາວ, ພາສາມົ້ງ, ພາສາກຶມມຸ) ມີ 7 ລາຍການ"(2); ນອກນີ້ຍັງສາມາດຜະລິດລາຍການພັດທະນາຊຽງຂວາງແດນງາມສົ່ງອອກອາກາດໂທລະພາບແຫ່ງຊາດລາວຊ່ອງ 1 ທຸກໆ ວັນອັງຄານ.

"ການເຄື່ອນໄຫວວຽກງານຂ່າວສານທາງວິທະຍຸ-ໂທລະພາບ ໃນປີ 2022 ລົງເກັບກຳຂ່າວໄດ້ທັງໝົດ 2.778 ບົດຂ່າວ, ລື່ນຄາດໝາຍ 178 ບົດຂ່າວ, ອ່ານຂ່າວອອກອາກາດທາງວິທະຍຸ-ໂທລະພາບໄດ້ 2.778 ບົດຂ່າວ, ສະເໜີບົດໄດ້ 412 ບົດ, ຈັດລາຍການຕ່າງໆທາງວິທະຍຸ-ໂທລະພາບໄດ້ 3.765 ລາຍການ, ສົ່ງຂ່າວໃຫ້ວິທະຍຸ-ໂທລະພາບແຫ່ງຊາດໄດ້ທັງໝົດ 1.432 ບົດຂ່າວ, ລື່ນຄາດໝາຍ 882 ຂ່າວ; ໃນນີ້, ພາສາມົ້ງ ຈຳນວນ 154 ບົດຂ່າວ, ພາສາກຶມມຸ ຈຳນວນ 166 ບົດຂ່າວ, ຈັດລາຍການພັດທະນາຊຽງຂວາງແດນງາມອອກອາກາດທາງໂທລະພາບແຫ່ງຊາດລາວໄດ້ 50 ຄັ້ງ, ຈັດລາຍການທ່ອງແດນເມືອງຊຽງອອກອາກາດໄດ້ 4 ຄັ້ງ, ຮັບຂ່າວຈາກບັນດາເມືອງໄດ້ 473 ບົດຂ່າວ, ພະແນກການໄດ້ 536 ບົດຂ່າວ, ລົງຂ່າວທາງເຟສບຸກໄດ້ 1.039 ບົດຂ່າວ ມີຜູ້ຕິດຕາມເພຈວິທະຍຸໂທລະພາບແຂວງຊຽງຂວາງທັງໝົດ 163.976 ຄົນ, ມີຜູ້ກົດໄລ້ທັງໝົດ 61.991 ເທື່ອຄົນ, ມີຜູ້ເຂົ້າເບິ່ງຂ່າວທັງໝົດ 6.250.201 ເທື່ອຄົນ"(3), ໃນນີ້ໄດ້ສຸມໃສ່ເກັບກຳຂ່າວນຳຄະນະສະເພາະກິດກ່ຽວກັບການຕ້ານ ແລະສະກັດກັ້ນການແຜ່ລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (ໂຄວິດ-19) ຢູ່ພາຍໃນແຂວງ ແລະການຖະແຫຼງຂ່າວປະຈຳວັນຂອງຄະນະສະເພາະກິດມາອອກອາກາດທາງວິທະຍຸ ແລະສື່ອອນລາຍຂອງແຂວງໃຫ້ທັນເວລາ, ສຸມໃສ່ລົງເຄື່ອນ

(1) ສະຖິຕິພະນັກງານ-ລັດຖະກອນປະຈຳປີ 2022 ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວແຂວງຊຽງຂວາງ.

(2) ຜັງລາຍການອອກອາກາດວິທະຍຸ-ໂທລະພາບ ແຂວງຊຽງຂວາງ.

(3) ບົດສະຫຼຸບປະຈຳປີ 2022 ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວແຂວງຊຽງຂວາງ.

ໄຫວເກັບກຳຂ່າວການສະເຫຼີມສະຫຼອງປີສາມັກຄີມິດຕະພາບລາວ-ຫວຽດນາມ 2022, ການກະກຽມຄວາມພ້ອມເປັນເຈົ້າພາບທີ່ດີງານມະຫາກຳກິລາແຫ່ງຊາດຄັ້ງທີ XI ທີ່ແຂວງຊຽງຂວາງໄດ້ຮັບກຽດເປັນເຈົ້າພາບຕິດພັນກັບພິທີສະເຫຼີມສະຫຼອງໄຫຫີນເປັນມໍລະດົກໂລກ ແລະພິທີສົມໂພດພະເຈົ້າອົງຫຼວງປະທານພອນທີ່ວັດໄຫຫີນມີໄຊຍະລາມ, ເຄື່ອນໄຫວສຳພາດແຕ່ລະພາກສ່ວນໃນການຈັດຕັ້ງຜັນຂະຫຍາຍ 2 ວາລະແຫ່ງຊາດມາອອກອາກາດຜ່ານສື່ໃຫ້ສັງຄົມຮັບຮູ້ສຳເລັດຕາມລະດັບຄາດໝາຍ.

ການເຄື່ອນໄຫວ ແລະການປັບປຸງວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບຢູ່ແຂວງຊຽງຂວາງ ໃນໄລຍະຜ່ານມາໂດຍລວມແມ່ນມີຜົນສຳເລັດໃນຫຼາຍດ້ານ, ແຕ່ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງຜູ້ຊົມ-ຜູ້ຟັງ, ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະຄວາມກ້າວໜ້າຂອງເຕັກໂນໂລຊີຂໍ້ມູນຂ່າວສານແລ້ວ, ວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບຢູ່ແຂວງຊຽງຂວາງຍັງມີຫຼາຍດ້ານຈຳກັດ ເຊິ່ງຍັງບໍ່ທັນສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກ-ລັດ ແລະສັງຄົມເທົ່າທີ່ຄວນນັ້ນຈຶ່ງມີຄວາມຈຳເປັນຕ້ອງໄດ້ເອົາໃຈໃສ່ປັບປຸງແກ້ໄຂ, ປ່ຽນແປງດ້ານຈິນຕະນາການ ແລະກົນໄກດັ່ງນີ້:

1). ຄະນະພັກ, ອົງການປົກຄອງຂັ້ນຕ່າງໆຂອງແຂວງ ໂດຍສະເພາະແມ່ນພະແນກການທີ່ກ່ຽວຂ້ອງຍັງບໍ່ທັນເອົາໃຈໃສ່ໃນການຄົ້ນຄວ້າເຊື່ອມຊຶມບັນດາທັດສະນະຂອງພັກ, ນະໂຍບາຍຂອງລັດຕໍ່ວຽກງານສື່ມວນຊົນໃນໄລຍະໃໝ່.

2). ຄວາມຮູ້, ຄວາມສາມາດຂອງບຸກຄະລະກອນທີ່ເຮັດວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບ ກໍຄືຂະແໜງການທີ່ກ່ຽວຂ້ອງບໍ່ທັນສູງ (ຈຳກັດທາງດ້ານປະລິມານ ແລະຄຸນນະພາບ); ການກໍ່ສ້າງພະນັກງານວິຊາການດ້ານວິທະຍຸ-ໂທລະພາບຍັງມີຈຳນວນຈຳກັດ, ການກວດແກ້ເນື້ອໃນ ແລະການອອກຂ່າວບາງຄັ້ງຍັງຊັກຊ້າບໍ່ທັນກັບສະພາບການທີ່ເກີດຂຶ້ນ.

3). ເນື້ອໃນຂອງຂ່າວສານວິທະຍຸ-ໂທລະພາບ ຍັງບໍ່ທັນແຫຼມຄົມ, ຊັດເຈນ, ສ່ອງແສງຊີວິດຕົວຈິງໄດ້ຢ່າງເລິກເຊິ່ງ ແລະທັນກັບເຫດການ; ການຊອກປັດໄຈໃໝ່ໃນການໂຄສະນາວຽກດີຄົນເດັ່ນບັນດາບົດຮຽນທີ່ດີເກີດຂຶ້ນໃນຂະບວນວຽກງານຕົວຈິງຂອງມະຫາຊົນຍັງເຮັດໄດ້ໜ້ອຍ ແລະບໍ່ຕໍ່ເນື່ອງ;

4). ການສະໜອງງົບປະມານ, ພາຫະນະ, ອຸປະກອນ ແລະເຄື່ອງມືເຂົ້າໃນການເຄື່ອນໄຫວວຽກງານຂ່າວສານທາງວິທະຍຸ-ໂທລະພາບບໍ່ທັນພຽງພໍກັບຄວາມຕ້ອງການຂອງວຽກງານຕົວຈິງ.

ໂດຍຍຶດໝັ້ນຕໍ່ທັດສະນະຂອງພັກກ່ຽວກັບວຽກງານສື່ມວນຊົນ, ອີງໃສ່ທິດທາງແຜນພັດທະນາວຽກງານຖະແຫຼງຂ່າວ-ສື່ມວນຊົນໃນສະເພາະໜ້າ ແລະຍາວນານຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ "ພັດທະນາສື່ມວນຊົນລາວໃຫ້ກ້າວສູ່ຄຸນນະພາບ, ທັນສະໄໝ, ວ່ອງໄວ-ທັນເຫດການ, ເປັນກະບອກສຽງອັນແຫຼມຄົມຂອງພັກ-ລັດ ທັງລວງເລິກ ແລະລວງກວ້າງ, ສ້າງຄວາມເຂັ້ມແຂງ ແລະທັນໄປສູ່ກຸ້ມຕົນເອງເທື່ອລະກ້າວພົວພັນເຊື່ອມໂຍງກັບສື່ມວນຊົນສາກົນ, ຮັບ

ປະກັນຄວາມປອດໄພ ແລະສະຖຽນລະພາບທາງດ້ານຂໍ້ມູນຂ່າວສານ, ສ້າງບຸກຄະລາກອນທີ່ໄດ້ມາດຕະຖານສື່ມວນຊົນລາວສົມຄູ່ກັບຍຸກສະໄໝ"(1) ແລະອີງໃສ່ແຜນພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວແຂວງຊຽງຂວາງຈາກບັນຫາທີ່ກ່າວມານັ້ນ ຜູ້ຂຽນເຫັນວ່າຄວນສືບຕໍ່ແກ້ໄຂບາງວຽກດັ່ງນີ້:

ໜຶ່ງ, ຄະນະພັກຂັ້ນຕ່າງໆຄວນເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພະນັກງານ-ລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງເປັນປະຈຳ, ປະຕິບັດລະບອບດຳເນີນຊີວິດການເມືອງສຳຫຼວດກວດກາຢ່າງເປັນປົກກະຕິ ພ້ອມທັງຕີລາຄາພະນັກງານໃຫ້ຖືກຕ້ອງເພື່ອສ້າງໃຫ້ເຂົາເຈົ້າມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ ແລະມີຄວາມຕື່ນຕົວສູງ, ມີຄວາມຮັບຜິດຊອບໃນວິຊາສະເພາະຂອງຕົນດຳເນີນການກວດກາແກ້ໄຂບັນຫາໃຫ້ເຄັ່ງຄັດຖືກຕ້ອງກັບກົດໝາຍ, ລະບຽບຕາມແຕ່ລະຂັ້ນຕອນ; ເຊີດຊູຄວາມເປັນເຈົ້າການໄກ້ຊິດຕິດແທດກັບພະນັກງານວິຊາການທີ່ເຮັດວຽກງານຂ່າວ, ຂຸດຄົ້ນທ່າແຮງບົ່ມຊ້ອນ, ນຳເອົາຄວາມຄິດຄວາມເຫັນ, ຄວາມຫຍຸ້ງຍາກມາພິຈາລະນາ, ຄວນສະແດງຄວາມເປັນຫ່ວງເປັນໄຍ, ຈັດເວລາເຮັດວຽກເພື່ອຮັບຟັງລາຍງານກວດກາແນະນຳການປະຕິບັດ, ຕອບ ແລະແກ້ຄວາມສົນໃຈຂອງມະຫາຊົນ ຫຼື ສະໜອງຂໍ້ມູນຕ່າງໆທັງນີ້ກໍເພື່ອຮັບປະກັນຄວາມຖືກຕ້ອງຊັດເຈນໃນການຖະແຫຼງຂ່າວຢ່າງມີຊີວິດຊີວາ.

ສອງ, ການກໍ່ສ້າງ-ບຳລຸງພະນັກງານສື່ມວນຊົນເວົ້າລວມ, ການກໍ່ສ້າງ-ບຳລຸງພະນັກງານທາງດ້ານຂ່າວວິທະຍຸ-ໂທລະພາບແມ່ນມີຄວາມຈຳເປັນພາວະວິໄສ ເພາະເປັນກຳລັງຫຼັກແຫຼ່ງ, ເປັນກະບອກສຽງຂອງພັກ ທັງເຮັດໜ້າທີ່ເຜີຍແຜ່, ຕໍ່ສູ້ ແລະສຶກສາອົບຮົມປະຊາຊົນບັນດາເຜົ່າ ແນໃສ່ປົກປ້ອງແນວທາງ, ຊີ້ແຈງຄວາມຖືກຕ້ອງສ້າງໃຫ້ພັກກຳອຳນາດມີຄວາມໝັ້ນຄົງ, ຍືນຍົງ ແລະໄດ້ຮັບຄວາມໄວ້ວາງໃຈຈາກປະຊາຊົນ; ໃນການກໍ່ສ້າງ-ບຳລຸງພະນັກງານໃນຕໍ່ໜ້າຄວນເລັ່ງໃສ່ສ້າງພະນັກງານ-ລັດຖະກອນໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ, ມີຈັນຍາບັນ, ຈັນຍາທຳໃນອາຊີບ, ມີຈິດໃຈຮັບໃຊ້ຊາດ, ຮັບໃຊ້ປະຊາຊົນຢ່າງບໍລິສຸດໃຈ. ສ້າງຜູ້ສືບທອດປ່ຽນແທນໃນຕຳແໜ່ງງານຕ່າງໆຮັບປະກັນພະນັກງານ 3 ຮຸ່ນ, 3 ປະເພດ ແລະໄປຕາມທິດທັນເປັນໜຸ່ມທັງຮັບປະກັນທາງດ້ານປະລິມານແລະຄຸນນະພາບ"(21).

ສາມ, ຮັບປະກັນຕໍ່ໜ້າທີ່ການເມືອງຂອງພັກ "ໃນການພັດທະນາ ແລະຄຸ້ມຄອງສື່ມວນຊົນໃຫ້ເປັນລະບົບທັນສະໄໝ, ເປັນກະບອກສຽງອັນແຫຼມຄົມຂອງພັກ-ລັດ, ມີຄຸນນະພາບ, ມີຄວາມຫຼາກຫຼາຍ, ວ່ອງໄວ, ຊັດເຈນ ແລະທັນເຫດການ"(3); ວຽກງານຂ່າວວິທະຍຸ-ໂທລະພາບແຂວງຊຽງຂວາງຄວນເອົາໃຈໃສ່ພັດທະນາຄວາມຮູ້, ຄວາມສາມາດໃຫ້ແກ່ນັກຂ່າວ, ສ້າງພື້ນຖານວັດຖຸເຕັກນິກໃຫ້ມີຄວາມທັນສະໄໝ ເພື່ອໃຫ້ວຽກງານຂ່າວວິ

(1)(2)(3) ແຜນພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ 5 ປີ (2021-2025) ໜ້າ 11.

ທະຍຸ-ໂທລະພາບສືບຕໍ່ເຮັດກະຈາຍຂ່າວທີ່ມີເນື້ອໃນແຫຼມຄົມ, ຫຼາຍຮູບຫຼາຍສີ, ວ່ອງໄວທັນການ ແລະນຳພາທາງສຽງສັງຄົມໄປຖືກທິດ. ການຂຽນຂ່າວຕ້ອງຖືກກັບຄວາມເປັນຈິງຂອງເຫດການ, ຮັບປະກັນລັກສະນະຕົວຈິງ, ລັກສະນະສຶກສາອົບຮົມ, ລັກສະນະແນະນຳ ແລະລັກສະນະຕໍ່ສູ້ທີ່ສ່ອງແສງເຖິງທັດສະນະຂອງພັກ, ນະໂຍບາຍຂອງລັດ ແລະສ່ອງແສງໃຫ້ເຫັນຜົນງານການສ້າງສາພັດທະນາເສດຖະກິດ-ສັງຄົມຂອງບັນດາຮາກຖານການຜະລິດເພື່ອສ້າງສະຕິໃນການປົກປັກຮັກສາປະເທດຊາດ.

ສີ່, ໃນເງື່ອນໄຂທີ່ພວກເຮົາຫັນໄປສູ່ກົນໄກໃໝ່ນີ້ຮຽກຮ້ອງໃຫ້ມີນະໂຍບາຍ, ມີວິທີການທີ່ສອດຄ່ອງ ແລະຄວນສຸມທຸກຄວາມພະຍາຍາມ, ບຸກບືນເພື່ອຍາດແຍ່ງເອົາເງື່ອນໄຂທີ່ເອື້ອອຳນວຍ ແນໃສ່ສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ການເຄື່ອນໄຫວວຽກງານຂ່າວວິທະຍຸ-ໂທລະພາບ; ສະນັ້ນ, ຕ້ອງປະຕິບັດນະໂຍບາຍທີ່ຖືກຕ້ອງແທດເໝາະກັບໜ້າທີ່ວຽກງານແຕ່ລະໄລຍະ ເພື່ອຊຸກຍູ້ສົ່ງເສີມສະຕິປັນຍາຂອງພະນັກງານວິຊາການ ຫຼືເພື່ອນຮ່ວມງານຈາກພາຍນອກທີ່ໄດ້ທຸ່ມເທເຫື່ອແຮງ ແລະສະຕິປັນຍາປະກອບສ່ວນເຮັດໃຫ້ຜະລິດຕະພັນວຽກງານຂ່າວວິທະຍຸ-ໂທລະພາບອຸດົມໄປດ້ວຍມີເນື້ອຫາສາລະຕ່າງໆ, ຕອບສະໜອງນະໂຍບາຍ, ງົບປະມານ, ພາຫະນະອຸປະກອນທີ່ນຳມາໃຊ້ຕ້ອງແມ່ນເຄື່ອງທີ່ມີຄຸນນະພາບ, ທັນສະໄໝຖືກກັບລະບົບຂອງແຫ່ງຊາດ ແລະສາກົນເຊັ່ນ: ກ້ອງຖ່າຍພາບ, ເຄື່ອງອັດສຽງ, ເຄື່ອງຕັດຕໍ່ພາບຕັດຕໍ່ສຽງຕ້ອງດ້ວຍລະບົບດີຈີຕ໋ອນ.

ສັງລວມແລ້ວ, ວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບແມ່ນວຽກງານໜຶ່ງທີ່ສຳຄັນ ແລະຈຳເປັນສຳລັບສັງຄົມ ເພາະມັນເຮັດໜ້າທີ່ເຜີຍແຜ່ ແລະປົກປ້ອງແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ, ແລະລະບຽບຂອງລັດ. ວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບແມ່ນເຄື່ອນໄຫວໄປຕາມແນວທາງຂອງພັກ, ໃຫ້ສອດຄ່ອງກັບສະພາວະຄວາມເປັນຈິງ ເພື່ອເປັນກຳລັງແຮງສັງລວມຂອງການປະຕິວັດໃນໄລຍະປັດຈຸບັນ ແລະອະນາຄົດ; ການປັບປຸງວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບຢູ່ແຂວງຊຽງຂວາງ ແນໃສ່ເຮັດໃຫ້ວຽກງານຂ່າວສານທາງດ້ານວິທະຍຸ-ໂທລະພາບໄດ້ດຳລົງບົດບາດ ແລະເຄື່ອນໄຫວເຮັດໜ້າທີ່ຂອງຕົນຢ່າງມີປະສິດທິພາບ-ປະສິດທິຜົນເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານໂຄສະນະຖະແຫຼງຂ່າວເປັນກະບອກສຽງ ແລະເປັນເຄື່ອງມືອັນແຫຼມຄົມຂອງພັກ-ລັດໃນສະເພາະໜ້າ ແລະຍາວນານ.